23

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ 09539--

ຫ້ອງການ ເລກທີ :................/ຍທຂ.ຫກ

ນະຄອນຫຼວງວຽງຈັນ,ວັນທີ......14 JUN 2012

**ຮຽນ** : ທ່ານຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ , ນະຄອນຫລວງ .

- ເຈົ້າຂອງ ບໍລິສັດ,ໂຮງງານ,ໂຮງເລື່ອຍ, ເຈົ້າຂອງສິນຄ້າ, ສາງສິນຄ້າ,ບັນດາຜູ້ປະ ກອບ ການທຸລະກິດຂົນສົ່ງ ສິນຄ້າທຸກປະເພດ.

**ເລື່ອງ** : ການຄຸ້ມຄອງລົດຂົນສົ່ງສິນຄ້າ ຂອງຕ່າງປະເທດ ເຂົ້າ ມາ ສປປ ລາວ ຊົ່ວຄາວ.

- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງ ໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ14375/ຍທຂ,ລົງວັນທີ 14/11/2008 ວ່າດ້ວຍການຈັດຕັ້ງເຄື່ອນໄຫວຂອງ ຫ້ອງການ ກະຊວງ ໂຍທາທິການ ແລະ ຂົນສົ່ງ.
- ອີງຕາມສັນຍາ ແລະ ອະນຸສັນຍາ ວ່າດ້ວຍການຂົນສົ່ງຜ່ານແດນທາງບົກ ລະຫວ່າງ ລັດຖະບານ ສປປ ລາວ ກັບບັນດາ ປະເທດອ້ອມຂ້າງ.

ເພື່ອຈັດຕັ້ງປະຕິບັດລະບຽບການຂອງສັນຍາຂົນສົ່ງຜ່ານແດນທາງບົກ ລະຫວ່າງ ສປປ ລາວ ໄດ້ລົງ ນາມ ກັບບັ ດາ ປະເທດ ອ້ອມຂ້າງ ໃຫ້ຖືກຕ້ອງ, ເຂັ້ມງວດ, ເປັນເອກະພາບ ແລະ ມີຄວາມສະເໝີພາບ ກັບ ປະເທດ ຄູ່ສັນຍາ.

**ຫ້ອງການກະຊວງ ໂຍທາທິການ ແລະ ຂົນສົ່ງ ອອກແຈ້ງການດັ່ງນີ້ :**

1. ລົດຂົນສົ່ງ ຕ່າງປະເທດ ທຸກປະເພດຂອງ ປະເທດໃດທີ່ເຂົ້າມາ ສປປ ລາວ ຕ້ອງປະຕິບັດຕາມ ເງື່ອນໄຂ ຂອງ ສັນຍາຂົນສົ່ງຜ່ານແດນທາງບົກລະຫວ່າງ ລັດຖະບານແຫ່ງ ສປປ ລາວໄດ້ລົງນາມກັບ ລັດຖະບານ ປະເທດນັ້ນ ຢ່າງເຂັ້ມງວດ, ໂດຍສະເພາະລົດຂົນສົ່ງສິນຄ້າທີ່ເຂົ້າມາສົ່ງສິນຄ້າຜ່ານແດນຢູ່ ສປປລາວ ແລ້ວແມ່ນບໍ່ອະນຸຍາດໃຫ້ເຮັດການຂົນສົ່ງສິນຄ້າຢູ່ພາຍໃນ ປະເທດ (ລະຫວ່າງສອງຈຸດບົນດິນແດນ) ຂອງ ສປປ ລາວ ຢ່າງເດັດຂາດ.
2. ຫ້າມເຈົ້າຂອງສິນຄ້າ,ບໍລິສັດຂຸດຄົ້ນ,ໂຮງງານ,ໂຮງເລື່ອຍ,ສາງສິນຄ້າ,ບັນດາຜູ້ປະກອບການທຸລະກິດຂົນສົ່ງສິນຄ້າ ຂົນສິນຄ້າ ແລະ ເຮັດສັນຍາຂົນສົ່ງ ນຳລົດຂົນສົ່ງຂອງຕ່າງປະເທດ ທີ່ເຂົ້າມາສົ່ງສິນຄ້າຜ່ານແດນ ຊົ່ວຄາວຢູ່ ສປປ ລາວ ເພື່ອເຮັດການຂົນສົ່ງສິນ ຄ້າຢູ່ພາຍໃນລະຫວ່າງສອງຈຸດໃນດິນແດນຂອງ ສປປ ລາວ.
3. ມອບໃຫ້ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ,ນະຄອນຫລວງ ອອກແຈ້ງການ ແລະ ຊີ້ນຳໃຫ້ບັນດາຫົວໜ່ວຍທຸລະກິດ, ບໍລິສັດຂຸດຄົ້ນ, ໂຮງງານ,ໂຮງເລື່ອຍ ແລະ ສາງສິນຄ້າທີ່ກ່ຽວຂ້ອງພາຍໃນ ແຂວງ ຂອງຕົນຮັບຊາບ ແລະ ຈັດຕັ້ງປະຕິບັດ, ຕິດຕາມກວດກາການເຄື່ອນໄຫວ ຂອງ ລົດຕ່າງປະເທດ ໃນທ້ອງ ຖິ່ນຂອງຕົນ ຖ້າກໍລະນີກວດເຫັນ ຜູ້ລະເມີດ ໃຫ້ກ່າວເຕືອນ ແລະ ປັບໃໝຕາມລະບຽບການ, ກົດໝາຍ ຂອງ ສປປ ລາວ ຢ່າງເຂັ້ມງວດ.
4. ແຈ້ງການສະບັບນີ້ມີຜົນນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ,ໃນເວລາຈັດຕັ້ງປະຕິບັດຫາກພົບບັນຫາໃດທີ່ບໍ່ສາມາດແກ້ໄຂໄດ້ແມ່ນໃຫ້ລາຍງານກົມຂົນສົ່ງ ກະຊວງ ໂຍທາທິການ ແລະ ຂົນສົ່ງ ຊາບໂດຍດ່ວນເພື່ອຫາວິທີແກ້ໄຂໃຫ້ທັນເວລາ.

ດັ່ງນັ້ນ,ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

ຫົວໜ້າຫ້ອງການ

ດຣ ສັນຕິສຸກ ສິມມາລາວົງ